NSW GOVERNMENT | Education
Public Schools

# ຈົດໝາຍເຖິງພໍ່ແມ່/ຜູ້ປົກຄອງກ່ຽວກັບ *Nitbusters: ໂຄງການ ໂຕເຫົາ ຢູ່ໃນໂຮງຮຽນ*

## Letter to parents/carers concerning *Nitbusters: Head lice in schools program*

ຊື່ຂອງເດັກ ______________________________ ຫ້ອງຮຽນ ______________
Child's name | Class

ວັນທີ ຂອງ ວັນ Nitbusters ______________________________
Date of Nitbusters Day

ວັນທີ ຂອງ ວັນທີ່ຕ້ອງສົ່ງຟອມຍິນຍອມຄືນໄປ ______________________________
Date for return of consent form

ພໍ່ແມ່/ຜູ້ປົກຄອງທີ່ຮັກແພງ

Nitbusters ມີເປົ້າໝາຍໃນການສິດສອນບັນດາໂຮງຮຽນ, ບັນດານັກຮຽນ ແລະ ພໍ່ແມ່ກ່ຽວກັບເຫົາແລະການກຳຈັດມັນແບບໃດ.

ຂ້າພະເຈົ້າຂຽນຈົດໝາຍມາຫາທ່ານເພື່ອຂໍໃຫ້ທ່ານອະນຸຍາດໃຫ້ລູກທ່ານເຂົ້າຮ່ວມໃນ ວັນ Nitbusters ຊຶ່ງຈະມີຂຶ້ນໃນໂຮງຮຽນຕາມວັນທີ ທີ່ ໄດ້ບອກໄວ້ຢູ່ຂ້າງເທິງນີ້. ວັນ Nitbusters ເປັນວັນທີ່ບັນດາພໍ່ແມ່ອາດຈະຕ້ອງຊ່ວຍໃນການກວດແລະຮັກສາເດັກທຸກໆຄົນເລື້ອງເຫົາ.

ເດັກແຕ່ລະຄົນຖືກຊຸກຍູ້ໃຫ້ເຂົ້າຮ່ວມ. ບໍ່ມີເດັກຄົນໃດສາມາດເຂົ້າຮ່ວມໄດ້ໂດຍບໍ່ ມີຟອມຍິນຍອມທີ່ຖືກເຊັນຮັບ, ແລະ ພວກເຂົາຈະບໍ່ຖືກທຳໂທດໃດໆໃນການບໍ່ເຂົ້າຮ່ວມ. ພໍ່ແມ່/ຜູ້ດູແລ ແລະ/ຫຼືບັນດາເດັກສາມາດຖອນໂຕຈາກການ ກວດນີ້ໄດ້ທຸກເວລາ. ບັນດາເດັກທີ່ບໍ່ເຂົ້າຮ່ວມກໍ່ສາມາດຮຽນຮູ້ກ່ຽວກັບການຈຳແນກ ໂຕເຫົາແລະໄຂ່ເຫົາ ແລະ ການກຳຈັດມັນໄດ້ແບບໃດ.

ໃນ ວັນ Nitbusters ຜົມຂອງເດັກແຕ່ລະຄົນທີ່ເຂົ້າຮ່ວມຈະຖືກກວດເພື່ອໃຫ້ຮູ້ແນ່ວ່າມີການຕິດເຫົາຫຼືບໍ່. ບັນດາພໍ່ແມ່ທີ່ເປັນຜູ້ຊ່ວຍຈະໃສ່ຖົງມືຢາງຫຼືຖົງມືລາເຕັກສ໌ທີ່ໃສ່ແລ້ວຖິ້ມທັງໃນການ ກວດເບິ່ງແລະການຮັກສາ. ຖ້າວ່າໄດ້ພົບໄຂ່ເຫົາ ຫຼື ໂຕເຫົາ ກໍ່ຈະເອົານ້ຳຢານວດຜົມໃສ່ແລ້ວ ຫວີ ໃຫ້ທົ່ວ. ຫຼັງຈາກທີ່ຜົມທີ່ຫຍຸ້ງເກາະກັນນັ້ນມາຍອອກດ້ວຍການໃຊ້ຫວີແຂ້ວຫ່າງ ກໍ່ຈະໃຊ້ຫວີຖີ່ສຳລັບຫວີເຫົາເພື່ອຫວີເອົາໄຂ່ເຫົາແລະໂຕເຫົາອອກ. ຈະມີການປ່ຽນຖົງມືໃນການຮັກສາເດັກແຕ່ລະຄົນ. ຖ້າວ່າຫົວຂອງເດັກສະແດງໃຫ້ເຫັນວ່າໄດ້ຕິດເຫົາ ຫຼື ມີຫຼັກຖານຮອຍບາດແຜ ຫຼື ຂອງການເປັນໂຣກຜິວໜັງ ເດັກກໍ່ຈະບໍ່ຖືກກວດ ຫຼື ຖືກຮັກສາ.

ຫຼັງຈາກເຮັດແລ້ວໆ ຜົມຂອງເດັກກໍ່ຈະຖືກຫວີ ແລະ ເຮັດໃຫ້ຮຽບຮ້ອຍ. ຢານວດຜົມຈະບໍ່ຖືກລ້າງອອກເພາະວ່າມັນເປັນການຍາກທີ່ຈະລ້າງຢູ່ໃນໂຮງຮຽນ. ນ້ຳຢານວດຜົມຈະບໍ່ເຮັດໃຫ້ຜົມເສັຍ ແລະ ສາມາດລ້າງອອກໄດ້ເມື່ອເວລາເດັກກັບເມືອເຮືອນ.

ຫວີທຸກໆອັນຈະຖືກລ້າງໃຫ້ສະອາດລະຫວ່າງການຮັກສາແຕ່ລະຄັ້ງດ້ວຍນ້ຳຮ້ອນໃສ່ສະບູ່ ແລະ ລ້າງໄລອອກດ້ວຍນ້ຳຮ້ອນເພາະວ່າໂຕເຫົາຈະຕາຍໄດ້ດ້ວຍຄວາມຮ້ອນ 60ອົງສາ ເຊັລຊຽສ.

ຈົດໝາຍຈະຖືກສົ່ງໄປເຮືອນຫຼັງການກວດເພື່ອແຈ້ງໃຫ້ທ່ານຊາບຖ້າໄດ້ພົບໄຂ່ເຫົາ ໂຕເຫົາ ຫຼື ທັງໄຂ່ເຫົາແລະໂຕເຫົາຢູ່ຫົວຂອງລູກທ່ານ. ພໍ່ແມ່ທຸກໆຄົນຈະໄດ້ຮັບເຈັ້ຍຂໍ້ມູນກ່ຽວກັບການຈັດການເລື້ອງເຫົາແບບໃດເຖິງແມ່ນວ່າ ລູກ ຂອງພວກເຂົາບໍ່ໄດ້ເຂົ້າຮ່ວມໃນໂຄງການນີ້ ກໍ່ຕາມ.

ເພື່ອຈະໃຫ້ Nitbusters ມີຜົນສຳເຣັດຢູ່ໃນ ໂຮງຮຽນຂອງພວກເຮົາ ເດັກທຸກໆຄົນຄວນ ເຂົ້າຮ່ວມ. ມັນມີແຕ່ຫົວທີ່ມີເຫົາພຽງຫົວດຽວ ເທົ່ານັ້ນ ທີ່ຈະຕິດໄປທົ່ວທັງຫ້ອງຮຽນ. ຂໍ້ຄວາມສຳຄັນຄືບໍ່ວ່າຜູ້ໃດກໍ່ສາມາດຕິດເຫົາ ໄດ້ ບໍ່ວ່າກ່ຽວກັບອາຍຸ ເພດ ຫຼື ມາຈາກພູມຖານ ເບື້ອງຫຼັງແບບໃດ. ການຮັກສານີ້ຕ້ອງແມ່ນ ຢູ່ ກັບຊຸມຊົນ ແລະ ສືບຕໍ່ໄປ.

ໂຄງການນີ້ກວມເອົາຊຸມຊົນໂຮງຮຽນທັງໝົດ ເຮັດວຽກຮ່ວມກັນເພື່ອປະສານງານແລະດຳເນີນ ໂຄງການ ວັນ Nitbusters ຢູ່ໃນໂຮງຮຽນ ເພື່ອ ພະຍາຍາມກຳຈັດເຫົາຂອງນັກຮຽນ ໝົດທຸກຄົນ ໃນຄັ້ງດຽວ. ກຸ່ມພໍ່ແມ່ຂອງ ໂຮງ ຮຽນຈັດວັນນັ້ນດ້ວຍການໃຫ້ມີຄົນຊ່ວຍໃນ ການກວດ ແລະ ກຳຈັດເຫົາໃຫ້ເດັກທຸກໆຄົນ. ການກວດແມ່ນ ເຮັດໂດຍພໍ່ແມ່/ຜູ້ປົກຄອງອາສາສມັກໂດຍບົນ ພື້ນຖານເປັນຫ້ອງໆ ໄປ ໂດຍເລີ້ມເຮັດຫ້ອງຂອງ ເດັກທີ່ອາຍຸນ້ອຍ ທີ່ສຸດໃນເວລາຕົ້ນໆຂອງມື້ຮຽນໂຄງການນີ້ນຳໃຊ້ຫວີ ແລະ ນ້ຳຢານວດຜົມ ເປັນວິທີ ກຳຈັດ ເຫົາຊຶ່ງເປັນວິທີທີ່ປອດໄພ, ປາສຈາກນ້ຳຢາເຄມີ ແລະ ເອົາ ໂຕເຫົາອອກດ້ວຍການຫວີຜົມ.

ຖ້າທ່ານເຫັນດີໃນການເຂົ້າຮ່ວມ ວັນ Nitbusters ຂອງລູກທ່ານ ກະຣຸນາຂຽນຕື່ມ ຟອມຍິນຍອມເປັນພາສາອັງກິດ ແລະ ສົ່ງກັບຄືນໄປໃຫ້ໂຮງຮຽນຕາມວັນທີທີ່ບອກໄວ້ ຂ້າງເທິງ. ຕ້ອງເຊັນຟອມຍິນຍອມຕ່າງ ຫາກ ສຳລັບ ເດັກແຕ່ລະຄົນ.

ຂໍ້ມູນນີ້ແມ່ນຢູ່ບົນພື້ນຖານຂອງຂໍ້ມູນທີ່ມີໄວ້ ໃຫ້ທີ່ເວັບໄຊຕ໌ຂອງ Nitbusters ກົມ ອະນາມັຍ NSW.